ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----====000====-----

ຄະນະກຳມະການຄຸ້ມຄອງຫຼັກຊັບ
Lao Securities Commission

ເລກທີ 0014 /ສຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 11 ຕຸລາ 2019

ໃບອະນຸຍາດ

ອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ແລະ ຜູ້ຖືຮຸ້ນເດີມ

- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ ສະບັບເລກທີ 21/ສພຊ ລົງວັນທີ 10 ທັນວາ 2012;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 195/ນຍ ລົງວັນທີ 12 ມິຖຸນາ 2017;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກ ສະບັບເລກທີ 013/ຄຄຊ ລົງວັນທີ 17 ທັນວາ 2013.

ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ອະນຸຍາດ:

ມາດຕາ 1: ໃຫ້ບໍລິສັດ (ຊື່ເປັນພາສາລາວ): .....ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.....

(ຊື່ເປັນພາສາສາກົນ): ..... **BANQUE POUR LE COMMERCE EXTERIEUR LAO PUBLIC** .....

ທະບຽນວິສາຫະກິດເລກທີ: .....**0429/ຈຫວ**.....

ທຶນຈົດທະບຽນ: .....**1.038.616.500.000**.....ກີບ

ທີ່ຕັ້ງສຳນັກງານ: ບ້ານ.....**ຊຽງຍືນ**....., ເມືອງ .....**ຈັນທະບຸລີ**.....,

ແຂວງ.....**ນະຄອນຫຼວງວຽງຈັນ**....., ຖະໜົນ .....**ປາງຄຳ**.....

ອອກຮຸ້ນປະເພດ: .....**ຮຸ້ນສາມັນ**..... ລະຫັດ: LA3000010006

ຈຳນວນຮຸ້ນທີ່ອອກ: ..... **20.772.300**.....ຮຸ້ນ

ມູນຄ່າກຳນົດ: ..... **5.000**.....ກີບ/ຮຸ້ນ

ລາຄາຂາຍໃຫ້ແກ່ຜູ້ຖືຮຸ້ນເດີມ: ..... **5.450**.....ກີບ/ຮຸ້ນ

ລາຄາຂາຍໃຫ້ແກ່ມວນຊົນ: ..... **5.550**.....ກີບ/ຮຸ້ນ

ມູນຄ່າທັງໝົດ: .....**114.870.815.000**.....ກີບ

ມາດຕາ 2: ພາຍຫຼັງອອກຈຳໜ່າຍຮຸ້ນແລ້ວ **ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ** ຕ້ອງປະຕິບັດຕາມ ລະບຽບການລາຍງານ ແລະ ການເປີດເຜີຍຂໍ້ມູນ ແລະ ລະບຽບການອື່ນໆທີ່ກ່ຽວຂ້ອງຢ່າງເຂັ້ມງວດ.

ມາດຕາ 3: ໃບອະນຸຍາດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຫົວໜ້າ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

ສາຍສະໝອນ ຈັນທະຈັກ

ໝາຍເຫດ:

1. ໃບອະນຸຍາດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ແລະ ຜູ້ຖືຮຸ້ນເດີມ ສະບັບນີ້ ມີຜົນນຳໃຊ້ສະເພາະການອອກຈຳໜ່າຍຮຸ້ນຄັ້ງນີ້ ເທົ່ານັ້ນ.
2. ບໍລິສັດທີ່ໄດ້ຮັບອະນຸຍາດໃຫ້ອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ແລະ ຜູ້ຖືຮຸ້ນເດີມ ບໍ່ມີສິດມອບ, ໂອນ ຫຼື ໃຫ້ບຸກຄົນອື່ນນຳໃຊ້ ໃບອະນຸຍາດສະບັບນີ້ໄດ້.
3. ພາຍຫຼັງບໍລິສັດໄດ້ຮັບອະນຸຍາດໃຫ້ອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ແລະ ຜູ້ຖືຮຸ້ນເດີມ ຕ້ອງປະຕິບັດຕາມລະບຽບ ແລະ ຂັ້ນຕອນ ການອອກຈຳໜ່າຍຮຸ້ນທີ່ໄດ້ກຳນົດໄວ້.
4. ທຸກການປັບປຸງ, ປ່ຽນແປງ ຂໍ້ມູນທີ່ໄດ້ກຳນົດໄວ້ໃນໃບອະນຸຍາດສະບັບນີ້ ຕ້ອງໄດ້ຮັບການເຫັນດີຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຢ່າງເປັນລາຍລັກອັກສອນ.